ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ
ສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດ-ສັງຄົມ

# ບົດຄົ້ນຄວ້າສຶກສາຄວາມເປັນໄປໄດ້ໃນການກຳນົດນະໂຍບາຍການປະກັນລາຄາເຂົ້າຢູ່ ສປປ ລາວ

## ກໍລະນີສຶກສາ: ເມືອງຈຳພອນ, ແຂວງສະຫວັນນະເຂດ

ສະເໜີໂດຍ: ສົມບັດ ແສງດາລາ

ນະຄອນຫຼວງວຽງຈັນ, ວັນທີ 18 ມັງກອນ 2024

# 1. ຄວາມເປັນມາ ແລະ ເຫດຜົນຂອງການຄົ້ນຄວ້າ

- ກະສິກຳເປັນຂະແໜງເສດຖະກິດທີ່ສຳຄັນຂອງ ສປປ ລາວ, ລວມຍອດມູນຄ່າຜົນຜະລິດກະສິກຳ ກວມເອົາ 17.8% ຂອງ GDP ໃນປີ 2022.
- ກຳລັງແຮງງານປະກອບອາຊີບຕົ້ນຕໍໃນຂະແໜງການກະສິກຳ ກວມເອົາ 78%, ຜະລິດຕະພັນກະສິກຳຕົ້ນຕໍມີ: ເຂົ້າ,ພືດຜັກ, ໝາກໄມ້ສັດລ້ຽງ, ປາ ແລະ ອື່ນໆ.
- ຊາວກະສິກອນໃນ ສປປ ລາວ ມີຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ,ໄພພິບັດທາງທຳມະຊາດ,ພະຍາດລະບາດ ແລະ ສະພາບການປ່ຽນແປງຂອງລາຄາຜະລິດຕະພັນກະສິກຳ, ໂດຍສະເພາະແມ່ນການປ່ຽນແປງລາຄາເຂົ້າ.
- ການສ້າງລະບົບ ແລະ ການຄ້ຳປະກັນລາຄາເຂົ້າຈຶ່ງມີຄວາມສຳຄັນຕໍ່ການຜະລິດຂອງຊາວກະສິກອນ ເພື່ອຫລຸດຜ່ອນຜົນກະທົບທາງດ້ານເສດຖະກິດ, ຊ່ວຍເຫຼືອຊາວກະສິກອນ, ຍົກລະດັບຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ.
- ສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ໂດຍສະເພາະແມ່ນການຜະລິດເພື່ອຄ້ຳປະກັນສະບຽງອາຫານ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງກະສິກຳ.

# 1. ຈຸດປະສົງຂອງການຄົ້ນຄວ້າ

ສຶກສາຄົ້ນຄວ້າຄວາມເປັນໄປໄດ້ໃນການກຳນົດນະໂຍບາຍການປະກັນລາຄາເຂົ້າຢູ່ ສປປ ລາວ ກໍລະນີສຶກສາ: ເມືອງຈຳພອນ, ແຂວງສະຫວັນນະເຂດ ເພື່ອຊຸກຍູ້, ສົ່ງເສີມການຜະລິດຂອງຊາວກະສິກອນ ຍົກລະດັບລາຍໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂື້ນ ແລະ ຫລຸດພົ້ນອອກຈາກຄວາມທຸກຍາກ

## 1. ຄຳຖາມການຄົ້ນຄວ້າ

ເນື້ອທີ່ ແລະ ຜົນຜະລິດເຂົ້າໃນແຕ່ລະປີ?;ຕົ້ນທຶນ ແລະ ຄ່າໃຊ້ຈ່າຍໃນການຜະລິດເຂົ້າຂອງຄົວເຮືອນ?;ໄດ້ຮັບນະໂຍບາຍສົ່ງເສີມການຜະລິດຈາກພາກລັດ ແລະ ພາກສ່ວນຕ່າງໆ?; ຜະລິດເຂົ້າເພື່ອບໍລິໂພກ ຫຼື ຂາຍ ແລະ ຖ້າຂາຍໄດ້ຫລາຍປານໃດ?;ການເພີ່ມຂຶ້ນຂອງລາຄາສິນຄ້າມີຜົນກະທົບຕໍ່ການຜະລິດບໍ?;ລາຄາເຂົ້າໃນພື້ນທີ່ການສຶກສາມີການປ່ຽນແປງຄືແນວໃດ?;ຄວນມີການຄໍ້າປະກັນລາຄາເຂົ້າ ແລະ ຖ້າມີແຫຼ່ງທຶນມາຈາກໃສ?ສົມມຸດຖານທີ່ຕັ້ງຂຶ້ນ ເພື່ອເປັນບ່ອນອີງໃນການກຳນົດລາ ຄາຄື: ລາຄາເຂົ້າເປືອກຕົກຕໍ່າ, ຜົນຜະລິດເຂົ້າລົ້ນຕະຫລາດ, ຊາວນາປູກເຂົ້າຂາຍ.

# 2. ວິທີວິທະຍາໃນການຄົ້ນຄວ້າ ແລະ ຂໍ້ມູນ

ຂັ້ນສູນກາງ | ຂັ້ນແຂວງ | ຂັ້ນເມືອງ | ຂັ້ນບ້ານ





1. ການຄ້ຳປະກັນຕົ້ນທຶນການຜະລິດ
2. ການຄ້ຳປະກັນລາຄາເຂົ້າເປືອກ
3. ການຄ້ຳປະກັນລາຍໄດ້ຈາກການຂາຍເຂົ້າເປືອກ

# 2. ວິທີວິທະຍາໃນການຄົ້ນຄວ້າ

| ລະດັບ | ຂະແໜງການ/ກະຊວງ | ຈຳນວນ | ຮູບແບບສຳພາດ |
|---|---|---|---|
| ສູນກາງ | ▪ ສະຖາບັນຄົ້ນຄວ້າອຸດສາຫະກຳ ແລະ ການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ<br>▪ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.<br>▪ ກົມແຜນການ, ກະຊວງກະສິກຳ ແລະ ປ່າໄມ້.<br>▪ ສະພາອຸດສາຫະກຳ ແລະ ການຄ້າແຫ່ງຊາດລາວ.<br>▪ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. | 5 ຂະແໜງການ/ກະຊວງ | ນຳໃຊ້ຄຳຖາມໃນການສຳພາດ ແລະ ເກັບກຳຂໍ້ມູນ , ການປຶກສາຫາລື ແລະ ແລກປ່ຽນບົດ ຮຽນ |
| ແຂວງ | ▪ ພະແນກແຜນການ ແລະ ການລົງທຶນ<br>▪ ພະແນກກະກະສິກຳ ແລະ ປ່າໄມ້.<br>▪ ພະແນກອຸດສາຫະກຳ ແລະ ການຄ້າ.<br>▪ ສະພາອຸດສາຫະກຳ ແລະ ການຄ້າ.<br>▪ ໂຮງສີແຂວງສະຫວັນນະເຂດ. | 5 ຂະແໜງການ | ນຳໃຊ້ຄຳຖາມໃນການສຳພາດ ແລະ ເກັບກຳຂໍ້ມູນ , ການປຶກສາຫາລື ແລະ ແລກປ່ຽນບົດ ຮຽນ |
| ເມືອງ | ▪ ຫ້ອງການແຜນການເມືອງຈຳພອນ.<br>▪ ຂະແໜງກະສິກຳ ແລະ ປ່າໄມ້<br>▪ ຂະແໜງອຸດສາຫະກຳ ແລະ ການຄ້າ. | 3 ຂະແໜງການ | ນຳໃຊ້ຄຳຖາມໃນການສຳພາດ ແລະ ເກັບກຳຂໍ້ມູນ , ການປຶກສາຫາລື ແລະ ແລກປ່ຽນບົດ ຮຽນ |
| ບ້ານ | ▪ ໂນນສີທັນ<br>▪ ເພຍກ້າ<br>▪ ສະຄືນໃຕ້ | 3 ບ້ານ | ນຳໃຊ້ແບບສອບຖາມໃນການສຳຫຼວດ ແລະ ເກັບກຳຂໍ້ມູນ |
| ລວມທັງໝົດພາກສ່ວນອີງການທີ່ສຳພາດ | | 16 | |

# ສະພາບການຜະລິດເຂົ້າຢູ່ ສປປ ລາວ

## ເນື້ອທີ່ການຜະລິດເຂົ້າ




## ຜົນຜະລິດເຂົ້າ



# ສະພາບການຜະລິດເຂົ້າຢູ່ແຂວງສະຫວັນນະເຂດ

- ການພັດທະນາເສດຖະກິດ-ສັງຄົມຂະຫຍາຍຕົວໄວ ແລະ ເປັນທ່າແຮງທາງດ້ານເສດຖະກິດຂອງ ສປປ ລາວ.
- ຜະລິດເພື່ອຄ້ຳປະກັນສະບຽງອາຫານ ແລະ ຕອບສະໜອງຄວາມຕ້ອງການພາຍໃນປະເທດ ແລະ ສົ່ງອອກໄປຂາຍຢູ່ຕ່າງປະເທດ.
- ເນື້ອທີ່ຜະລິດເຂົ້າ 236,562 ເຮັກຕ້າ ແລະ ສາມາດຜະລິດເຂົ້າໄດ້ 991,925 ໂຕນ.
- ຜະລິດເຂົ້າເປືອກໄດ້ທັງໝົດ 876.226 ໂຕນ, ເນື້ອທີ່ 236.564 ເຮັກຕ້າຜະລິດຕະພາບ 3,71 ໂຕນຕໍ່ເຮັກຕາ.
- ເຂົ້ານາປີ 730.440 ໂຕນ, ເນື້ອທີ່ປູກທັງໝົດ 206.318 ເຮັກຕ້າ, ຜະລິດຕະພາບ 3,55 ໂຕນຕໍ່ເຮັກຕາ.
- ເຂົ້ານາແຊງ 145.786 ໂຕນ, ເນື້ອທີ່ປູກ 30.246 ເຮັກຕາ, ຜະລິດຕະພາບ 4,82 ໂຕນຕໍ່ເຮັກຕາ.



# ສະພາບການຜະລິດເຂົ້າຢູ່ເມືອງຈຳພອນ

## ການພັດທະນາເສດຖະກິດ-ສັງຄົມຂອງເມືອງຈຳພອນ

- ລວມຍອດຜະລິດຕະພັນພາຍໃນ (GDP) ປະຕິບັດໄດ້ 2.538,89 ຕື້ກີບ, ທຽບໃສ່ປີ 2021 ເພີ່ມຂຶ້ນ 135,85 ຕື້ກີບ, ລາຍໄດ້ສະເລ່ຍ 21.149.000 ກີບຕໍ່ຄົນຕໍ່ປີ ຫຼື ເທົ່າກັບ 1.511 ໂດລາສະຫະລັດຕໍ່ຄົນ, ອັດຕາການຂະຫຍາຍຕົວ 5,24%.
- ຂະແໜງກະສິກຳຂະຫຍາຍຕົວໃນລະດັບ 4,94% ມູນຄ່າ 1.686,63 ຕື້ກີບ ກວມເອົາ 66,43% ຂອງ GDP ເທົ່າກັບ 100,84% ຂອງແຜນປີ 2022 (1.672,51 ຕື້ກີບ).
- ຂະແໜງອຸດສາຫະກຳ ຂະຫຍາຍຕົວໃນລະດັບ 5,84% ມູນຄ່າ 470,03 ຕື້ກີບ ກວມເອົາ 18,51% ຂອງ GDP ເທົ່າກັບ 95,72%.
- ຂະແໜງການບໍລິການຂະຫຍາຍຕົວໃນລະດັບ 5,85% ມູນຄ່າ 382,28 ຕື້ກີບ ກວມເອົາ 15,06% ຂອງ GDP; ລາຍຮັບສະເລ່ຍຕໍ່ຫົວຄົນປະມານ 2,424 ໂດລາສະຫະລັດຕໍ່ຄົນຕໍ່ປີ ຫຼື ເທົ່າກັບ 20,778,655 ກີບ.

## ໂຄງປະກອບເສດຖະກິດ




ລາຍຮັບເຂົ້າເປືອກທັງໝົດໄດ້ 74,449 ໂຕນໃນປີ 2019, ໄດ້ 147,254 ໂຕນໃນປີ 2020, ໄດ້, 149,485 ໂຕນໃນປີ 2021 ແລະ ໄດ້ 151,717 ໂຕນໃນປີ 2022.

ສະເລ່ຍລາຍຮັບເຂົ້າເປືອກໃນປີ 2019 ເທົ່າກັບ 669.19 ກິໂລກຣາມຕໍ່ຄົນ, ປີ 2020 ເທົ່າກັບ 1.220.26 ກິໂລກຣາມຕໍ່ຄົນ, ປີ 2021 ເທົ່າກັບ 1.227.20 ກິໂລຕໍ່ຄົນແລະ ປີ 2022 ເທົ່າກັບ 1.234.01 ກິໂລຕໍ່ຄົນ.

# ຕົ້ນທຶນການຜະລິດເຂົ້າ

- ຕົ້ນທຶນທີ່ຊາວນາຕ້ອງລົງທຶນຄື: ນ້ຳມັນເຊື້ອໄຟ , ປຸ໋ຍ, ຄ່ານ້ຳຊົນລະປະທານ, ແນວພັນ, ຢາຂ້າສັດຕູພືດ, ຄ່າແຮງງານ ແລະ ອື່ນໆ ເຊິ່ງຕົ້ນທຶນໃນການຜະລິດເຂົ້າໃນຕໍ່ລະດູການ 15 ລ້ານກີບ.
- ຊາວນາຍັງມີຄວາມສ່ຽງສູງຕໍ່ການຜະລິດໃນລະດູນາປີ, ໂດຍສະເພາະຜົນກະທົບຈາກໄພພິບັດທາງທຳມະຊາດເຊັ່ນ: ນ້ຳຖ້ວມ, ສັດຕູພືດລະບາດ, ລວມທັງການປ່ຽນແປງຂອງລາຄາສິນຄ້າທີ່ເພີ່ມສູງຂຶ້ນໃນປະຈຸບັນ



# 3. ຜົນການຄົ້ນຄວ້າ

- ການກຳນົດນະໂຍບາຍການຄ້ຳປະກັນລາຄາເຂົ້າເພື່ອຊ່ວຍເຫຼືອຊາວກະສິກອນກໍ່ຕໍ່ເມື່ອລາຄາເຂົ້າໃນທ້ອງຕະຫຼາດຕົກຕ່ຳ ແລະ ປະລິມານເຂົ້າລົ້ນຕະຫຼາດ. ໃນປີ 2012 ລາຄາເຂົ້າເປືອກຢູ່ໃນເມືອງຈຳພອນ ປະມານ 2,500 ກີບຕໍ່ກິໂລ, ແຕ່ເຖິງຢ່າງໃດກໍ່ຕາມ, ລາຄາເຂົ້າຄ່ອຍໆເພີ່ມຂຶ້ນໃນແຕ່ລະປີ ເຊິ່ງໃນປີ 2022 ຜ່ານມາ ປະມານ 5,000-6,000 ກີບຕໍ່ກິໂລ ເຊິ່ງເປັນລາຄາທີ່ເພີ່ມສູງຂຶ້ນເມື່ອທຽບໃສ່ປີ 2012.
- ການຜະລິດຂອງຊາວນາໃນເມືອງຈຳພອນເພື່ອບໍລິໂພກ ແລະ ຂາຍບາງສ່ວນເພື່ອໃຊ້ຈ່າຍໃນຄອບຄົວ. ໃນປີ 2022 ສາມາດຜະລິດເຂົ້າໄດ້ 126,545 ໂຕນ, ສະເລ່ຍລາຍຮັບເຂົ້າເປືອກ 1,234 ກິໂລຕໍ່ຄົນຕໍ່ປີ ເຊິ່ງຄິດໄລ່ເປັນມູນຄ່າເງິນ 7.404.000 ກີບຕໍ່ຄົນຕໍ່ປີ.
- ໃນປະຈຸບັນ, ລາຄາສິນຄ້າ ແລະ ຄ່າບໍລິການເພີ່ມສູງຂຶ້ນ ເຊິ່ງເປັນຜົນມາຈາກການເຕີບໂຕຂອງເສດຖະກິດຫລຸດລົງ, ແຕ່ ສປປ ລາວ ກຳລັງປະເຊີນກັບລາຄາສິນຄ້າເພີ່ມສູງຂຶ້ນ, ການປະກັນລາຄາເຂົ້າຈະຕ້ອງໃຊ້ຕົ້ນທຶນສູງຂຶ້ນຕາມສະພາບເສດຖະກິດ ເຊິ່ງໃນຄວາມເປັນຈິງຈາກເງື່ອນໄຂດັ່ງກ່າວຍັງບໍ່ສາມາດຄ້ຳປະກັນລາຄາເຂົ້າໄດ້.

# 3. ຜົນການຄົ້ນຄວ້າ (ຕໍ່)

- ການກຳນົດນະໂຍບາຍການປະກັນລາຄາເຂົ້າຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ໃນຊ່ວງສະພາບເສດຖະກິດມີການຖົດຖອຍໃນປະຈຸບັນ, ໃນສະພາບຕົວຈິງລາຄາສິນຄ້າມີການເພີ່ມຂຶ້ນຢ່າງຕໍ່ເນື່ອງເຊັ່ນດຽວກັບການເພີ່ມຂຶ້ນຂອງລາຄາເຂົ້າຢູ່ໃນຂອບເຂດທົ່ວປະເທດ.
- ການປະກັນລາຄາເຂົ້າຕ້ອງໄດ້ກຳນົດເປັນຕົວເລກຂັ້ນຕ່ຳ ທີ່ລັດຖະບານຕ້ອງມີງົບປະມານ ຫຼື ກອງທຶນເພື່ອແຮໄວ້ໃນເວລາລາຄາເຂົ້າມີການປ່ຽນແປງ ແລະ ສິ່ງທີ່ສຳຄັນຕ້ອງມີງົບປະມານສະເພາະ.
- ໃນສະພາບປະຈຸບັນສະພາບເສດຖະກິດຂອງ ສປປ ລາວ ກຳລັງປະເຊີນກັບພາວະເສດຖະກິດຖົດຖອຍ ເຊິ່ງສາເຫດມາຈາກສະພາບເສດ ຖະກິດໂລກມີຄວາມຜັນແປ ແລະ ການເພີ່ມຂຶ້ນຂອງລາຄາສິນຄ້າ ແລະ ນ້ຳມັນ ກໍ່ໄດ້ສົ່ງຜົນກະທົບຕໍ່ການເຕີບໂຕຂອງເສດຖະກິດ ສປປ ລາວ.

# ການປ່ຽນແປງລາຄາເຂົ້າຢູ່ ສປປ ລາວ

## ລາຄາເຂົ້າເປືອກ ແລະເຂົ້າສານ ແຕ່ປີ 2012-2022




## ລາຄາເຂົ້າໃນ 6 ເດືອນຕົ້ນປີ 2023



# 4. ສະເໜີແນະດ້ານນະໂຍບາຍ

- ພາກລັດ ແລະ ພາກສ່ວນທີ່ກ່ຽວຂ້ອງຄວນມີນະໂຍບາຍສົ່ງເສີມການຜະລິດເຂົ້າຂອງຊາວນາ ເພື່ອຊ່ວຍເຮັດໃຫ້ການຜະລິດຂອງເຂົາເຈົ້າມີປະສິດທິພາບ ແລະ ປະສິດທິຜົນ.
- ຄົ້ນຄວ້າ ແລະ ສ້າງນະໂຍບາຍສົ່ງເສີມການຜະລິດໃຫ້ແກ່ຊາວກະສິກອນ ເພື່ອໃຫ້ເຂົາເຈົ້າມີກຳລັງໃນການຜະລິດ ແລະ ສາມາດຕອບສະໜອງກັບຄວາມຕ້ອງການພາຍໃນ ແລະ ສາມາດສົ່ງອອກແຂ່ງຂັນກັບຕ່າງປະເທດໄດ້, ສິ່ງສຳຄັນທີ່ສຸດແມ່ນຊອກຫາຊ່ອງທາງ ແລະ ນະໂຍບາຍຕ່າງໆ ເພື່ອເປັນການສະໜັບສະໜູນການຜະລິດເຂົ້າຂອງຊາວກະສິກອນ, ໂດຍສະເພາະແມ່ນການກຳນົດປັດໄຈຕ່າງເຊັ່ນ: ກຳນົດລາຄານ້ຳມັນ, ຄ່າແຮງງານ, ຄ່າປຸ໋ຍ ແລະ ອື່ນໆ ທີ່ເປັນສາເຫດເຮັດໃຫ້ຕົ້ນທຶນໃນການຜະລິດສູງ.
- ສ້າງພື້ນຖານໂຄງລ່າງໃຫ້ມີຄວາມສະດວກສະບາຍ, ປັບປຸງປະສິດທິພາບຂອງແນວພັນ ແລະ ສ້າງສິ່ງອຳນວຍຄວາມສະດວກຕ່າງໆໃນການຜະລິດເຊັ່ນ: ລົງທຶນໃນການປັບປຸງລະບົບຊົນລະປະທານທີ່ມີຢູ່ແລ້ວ ແລະ ສ້າງໃໝ່ໃນເຂດທີ່ເໝາະສົມ ຊ່ວຍເຫຼືອຜູ້ເຮັດການຜະລິດໃຫ້ໄດ້ຮັບໂຍບາຍເງິນກູ້ດອກເບ້ຍຕ່ຳ ຫຼື ກອງທຶນສົ່ງເສີມການຜະລິດຕ່າງໆ ເພື່ອເຮັດໃຫ້ຜູ້ປູກຝັງສາມາດເພີ່ມປະສິດທິພາບໃນການຜະລິດຈາກການຊື້ ຫຼື ນຳເຂົ້າປຸ໋ຍ, ຝຸ່ນ, ແນວພັນ ແລະ ເຄື່ອງມືຮັບໃຊ້ໃນການຜະລິດທີ່ມີຄຸນນະພາບ.

# 4. ສະເໜີແນະດ້ານນະໂຍບາຍ

- ການຈັດຕັ້ງປະຕິບັດມາດຕະການໄລຍະສັ້ນດ້ວຍການຈຳກັດການນຳເຂົ້າ ແລະ ສະບຽງອາຫານຈາກຕ່າງປະເທດ ເນື່ອງຈາກວ່າເຂົ້າຕ່າງປະເທດລາຄາຖືກກວ່າ, ແຕ່ຄຸນນະພາບໃກ້ຄຽງກັບເຂົ້າລາວ ເພື່ອເປັນການສົ່ງເສີມຜະລິດຕະພັນພາຍໃນ ແລະ ເພີ່ມປະລິມານການສົ່ງອອກ ແລະ ແຂ່ງຂັນກັບຕະຫຼາດພາຍນອກໄດ້.
- ເພີ່ມທະວີການນຳໃຊ້ເຕັກນິກການຜະລິດ ແລະ ເຕັກໂນໂລຊີທີ່ທັນສະໄໝ ເພື່ອເພີ່ມປະສິດທິພາບ ແລະ ຫລຸດຜ່ອນຕົ້ນທຶນ, ນຳໃຊ້ຊີນລະປະທານທີ່ດີ, ແນວພັນທີ່ແທດເໝາະກັບດິນ ແລະ ໄລຍະເວລາການເຕີບໂຕທີ່ເໝາະສົມ.
- ລັດຖະບານຄວນເພີ່ມວິທີການເຜີຍແຜ່ຂໍ້ມູນຕະຫຼາດໃຫ້ແກ່ຊາວກະສິກອນ, ໂດຍສະເພາະແມ່ນຄວາມຕ້ອງການເຂົ້າ, ການຜະລິດ, ການບໍລິໂພກ, ການສົ່ງອອກ ແລະ ລາຄາເຂົ້າ ສິ່ງເຫຼົ່ານີ້ຈະຊ່ວຍເຮັດໃຫ້ຜູ້ຜະລິດຮັບຮູ້ຂໍ້ມູນຂ່າວສານ ແລະ ມີແຮງຈູງໃຈໃນການຜະລິດເຂົ້າຕາມຄວາມຕ້ອງຊົມໃຊ້ພາຍໃນ ແລະ ການສົ່ງເຂົ້າອອກຂາຍສູ່ພາຍນອກ.
- ລັດຖະບານຄວນກຳນົດລາຄາສິນຄ້າໃຫ້ມີສະຖຽນລະພາບ ແລະ ສາມາດຄວບຄຸມໄດ້, ໂດຍສະເພາະແມ່ນລາຄາສິນຄ້າທີ່ຕິດພັນກັບການຜະລິດຂອງຊາວກະສິກອນເຊັ່ນ: ລາຄານ້ຳມັນ, ລາຄາປຸ໋ຍ, ຄ່າແຮງງານ, ແນວພັນ, ເຄື່ອງກົນຈັກ ແລະ ອື່ນໆທີ່ນຳໃຊ້ເຂົ້າໃນການຜະລິດ.
- ສະເໜີໃຫ້ມີການສຶກສາຄົ້ນຄວ້າ ແລະ ວິເຄາະ-ວິໄຈລົງເລິກ ເພື່ອກຳນົດລາຄາກາງຕາມໂຄງສ້າງລາຄາເຂົ້າເພື່ອຄ້ຳປະກັນໃຫ້ຜູ້ຜະລິດ ແລະ ຜູ້ບໍລິໂພກ ບໍ່ເສຍຜົນປະໂຫຍດຈາກການເກງກຳໄລໃນຂະບວນການຄ້າຂາຍເຂົ້າ.